**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເຈົ້າແຂວງ ເລກທີ....07..../ຈຂ
ຫຼວງນ້ຳທາ, ວັນທີ...27...ກໍລະກົດ...2023

# ຄຳສັ່ງ
## ວ່າດ້ວຍການປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ການລະບາດຂອງພະຍາດໄຂ້ຍຸງລາຍ ຢູ່ພາຍໃນແຂວງຫຼວງນ້ຳທາ.

**ເຖິງ:** ບັນດາພະແນກການ, ຄະນະເລຂາທິການສະພາປະຊາຊົນແຂວງ, 2 ກອງບັນຊາການ, ອົງການແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າແຂວງ, ອົງການລັດທຽບເທົ່າ, ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງຫຼວງນ້ຳທາ, ບັນດາທະນາຄານ, ລັດວິສາຫະກິດ, ໂຮງຮຽນ, ໂຮງໝໍ, ບັນດາເມືອງ 5 ເມືອງ, ຫ້າງຮ້ານເອກະຊົນ, ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງ.

**ເລື່ອງ:** ການປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ການລະບາດຂອງພະຍາດໄຂ້ຍຸງລາຍ ໃນປີ 2023 ຢູ່ແຂວງຫຼວງນ້ຳທາ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ໜັງສືສະເໜີຂອງພະແນກສາທາລະນະສຸກແຂວງ ສະບັບເລກທີ 2396/ສທຂ, ລົງວັນທີ 17 ກໍລະກົດ 2023.

ເພື່ອສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ການລະບາດຂອງພະຍາດໄຂ້ຍຸງລາຍ ຢູ່ພາຍໃນແຂວງຫຼວງນ້ຳທາ ບໍ່ໃຫ້ແຜ່ລະບາດອອກສູ່ວົງກວ້າງ, ຂໍຮຽກຮ້ອງມາຍັງບັນດາອົງການຈັດຕັ້ງພາກລັດ, ເອກະຊົນພາຍໃນແຂວງ ເປັນເຈົ້າການໃນການຮ່ວມມື ແລະ ປະກອບສ່ວນເຂົ້າໃນຂະບວນການກຽມພ້ອມໃນການປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ການລະບາດຂອງພະຍາດໄຂ້ຍຸງລາຍໃນປີ 2023 ໃຫ້ທັນເວລາ.

### ເຈົ້າແຂວງໆຫຼວງນ້ຳທາ ອອກຄຳສັ່ງດັ່ງນີ້:

1. ໃຫ້ບັນດາພະແນກການ, ຄະນະເລຂາທິການສະພາປະຊາຊົນແຂວງ, 2 ກອງບັນຊາການ, ອົງການແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າແຂວງ, ອົງການລັດທຽບເທົ່າ, ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງຫຼວງນ້ຳທາ, ບັນດາທະນາຄານ, ລັດວິສາຫະກິດ, ໂຮງຮຽນ, ໂຮງໝໍ, ບັນດາເມືອງ 5 ເມືອງ, ຫ້າງຮ້ານເອກະຊົນ, ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງ ເປັນເຈົ້າການໃນການຮ່ວມມື ແລະ ປະສານສົມທົບກັບພະແນກສາທາລະນະສຸກແຂວງ, ຫ້ອງການສາທາລະນະສຸກເມືອງ ເພື່ອສ້າງແຜນການຄວາມພ້ອມ ແລະ ຮັບປະກັນແຕ່ຫົວທີໃນການປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ສະພາບການແຜ່ລະບາດຂອງພະຍາດໄຂ້ຍຸງລາຍໃນປີ 2023 ຢ່າງທັນການ.

2. ເພື່ອຮັບປະກັນການຊີ້ນຳ-ນຳພາ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ການລະບາດຂອງພະຍາດໄຂ້ຍຸງລາຍ ໃຫ້ມີປະສິດທິຜົນນັ້ນ, ມອບໃຫ້ປະທານຄະນະການຕ້ານ ແລະ ຄວບຄຸມພະຍາດຕິດຕໍ່ຂັ້ນແຂວງ ແລະ ຂັ້ນເມືອງ ຊີ້ນຳບັນດາອົງການຈັດຕັ້ງພາກລັດ ແລະ ເອກະຊົນ ໃຫ້ມີຄວາມຮັບຜິດຊອບສູງ ເພື່ອນຳພາໃນການຈັດຕັ້ງປະຕິບັດຕົວຈິງໃຫ້ທົ່ວເຖິງ.

3. ມອບໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ອົງການຈັດຕັ້ງຂັ້ນບ້ານ ແລະ ພໍ່ແມ່ປະຊາຊົນທຸກພາກສ່ວນ ເຂົ້າຮ່ວມສ້າງຂະບວນການເພື່ອສຳຫຼວດ ແລະ ຕິດຕາມຄວາມໜາແໜ້ນຂອງໜອນນ້ຳຍຸງລາຍ, ພ້ອມທັງທຳລາຍແຫຼ່ງເພາະພັນຍຸງລາຍເປັນປົກກະຕິ, ຮັບປະກັນໃຫ້ປະຊາຊົນມີການປ່ຽນພຶດຕິກຳໂດຍອີງໃສ່ປະຕິບັດຄຳຂວັນ 5 ປ ຂອງກະຊວງສາທາລະນະສຸກວາງອອກ ຄືດັ່ງນີ້:

    1). ປິດຝາພາຊະນະທີ່ນຳໃຊ້ນ້ຳໃນເຮືອນ ແລະ ນອກເຮືອນ ເພື່ອບໍ່ໃຫ້ຍຸງລາຍມາໄຂ່ໃສ່.

    2). ປ່ຽນນ້ຳໃນພາຊະນະເຊັ່ນ: ເຕົ້າດອກໄມ້, ນ້ຳຮອງຕີນຕູ້,ຖານຮ່ອງຈອກນ້ຳ, ອ່າງເກັບນ້ຳເສຍທາງຫຼັງຕູ້ເຢັນ.

    3). ປ່ອຍປາຫາງນົກຍຸງເພື່ອກິນໜອນນ້ຳ.

    4). ປັບປຸງສິ່ງແວດລ້ອມອະນາໄມອ້ອມແອ້ມເຮືອນ ບໍ່ໃຫ້ມີກະໂປະ, ກະປ໋ອງ ແລະ ຢາງຕີນລົດທີ່ມີນ້ຳຂັງ.

    5). ປະຕິບັດໃຫ້ເປັນນິໄສປົກກະຕິທຸກອາທິດ.

4. ມອບໃຫ້ພະແນກສາທາລະນະສຸກແຂວງ, ຫ້ອງການສາທາລະນະສຸກເມືອງ ສົມທົບກັບພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ ໃຫ້ອອກສື່ໂຄສະນາສຸຂະສຶກສາການປ້ອງກັນ, ຄວບຄຸມການແຜ່ລະບາດຂອງພະຍາດໄຂ້ຍຸງລາຍຢູ່ເທດສະບານແຂວງ, ບັນດາເມືອງ ແລະ ບ້ານຢູ່ພາຍໃນແຂວງ ໃຫ້ທົ່ວເຖິງ ແລະ ຕໍ່ເນື່ອງ.

5. ເພື່ອຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດຕົວຈິງຂອງການປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ ຕ້ອງໄດ້ຈັດກອງປະຊຸມປຶກສາຫາລື ແລະ ສະຫຼຸບຖອດຖອນບົດຮຽນຕາມໄລຍະເວລາທີ່ເໝາະສົມ (ລວມທັງຂັ້ນແຂວງ ແລະ ຂັ້ນເມືອງ).

6. ໃຫ້ບັນດາໜວດໂຮງຮຽນມັດທະຍົມ, ປະຖົມ ທີ່ໄດ້ຜ່ານການຝຶກອົບຮົມພະຍາດໄຂ້ຍຸງລາຍຊີ້ນຳບັນດານັກຮຽນເຮັດການສຳຫຼວດ ແລະ ທຳລາຍແຫຼ່ງເພາະພັນຂອງຍຸງລາຍໃນຂອບເຂດຂອງຕົນເອງຮັບຜິດຊອບ.

7. ໃຫ້ບັນດາເມືອງ ແລະ ກຸ່ມບ້ານຮັບຜິດຊອບຊີ້ນຳ-ນຳພາ ປະຊາຊົນອອກແຮງງານວັນສຸກແດງ ເພື່ອທຳລາຍແຫຼ່ງເພາະພັນຂອງຍຸງລາຍ ພາຍໃນຂອບເຂດບ້ານທີ່ຕົນເອງຮັບຜິດຊອບ.

8. ມອບໃຫ້ພະແນກສາທາລະນະສຸກແຂວງ, ຫ້ອງການສາທາລະນະສຸກເມືອງ ສົມທົບກັບທຸກພາກສ່ວນ, ຂະແໜງການ ແລະ ອົງການຈັດຕັ້ງທັງພາກລັດ, ເອກະຊົນ ຈົ່ງພ້ອມກັນເອົາໃຈໃສ່ຈັດຕັ້ງປະຕິບັດ ຕາມຄຳສັ່ງສະບັບນີ້ຢ່າງເຂັ້ມງວດ, ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານແຂວງຊາບເປັນປົກກະຕິ.

9. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

**ບ່ອນສົ່ງ:**

| | | |
|---|---|---|
| 1. | ທ່ານເຈົ້າແຂວງ, ຮອງເຈົ້າແຂວງ ທ່ານລະ | 1 ສະບັບ. |
| 2. | ພາກສ່ວນທີ່ກ່ຽວຂ້ອງ ບ່ອນລະ | 1 ສະບັບ. |
| 3. | ສຳເນົາ | 2 ສະບັບ. |

ວຽງສະຫວັດ ສີພັນດອນ